ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ເປີດກວ້າງທາບທາມຄຳເຫັນຕໍ່ຮ່າງ ແບບຟອມລາຍງານການເຄື່ອນໄຫວທຸລະກຳ




ໃນຕອນເຊົ້າຂອງວັນທີ 16 ທັນວາ 2020 ທີ່ ຫ້ອງປະຊຸມຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ກົມຄຸ້ມຄອງລະບົບຊຳລະສະສາງ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງກອງປະຊຸມເປີດກວ້າງທາບທາມຄຳເຫັນຕໍ່ຮ່າງແບບຟອມລາຍງານການເຄື່ອນໄຫວທຸລະກຳຂອງຜູ້ຄວບຄຸມລະບົບ ແລະ ຜູ້ໃຫ້ບໍລິການຊຳລະ ໂດຍການເປັນປະທານຂອງທ່ານນາງ ລຳມອນ ສິມມະໄລວົງ ຮອງຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ, ທຫລ ພ້ອມດ້ວຍການເຂົ້າຮ່ວມຂອງບັນດາທະນາຄານທຸລະກິດ, ຜູ້ປະກອບການທີ່ເປັນຜູ້ໃຫ້ບໍລິການຊຳລະ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງຫຼາຍກວ່າ 50 ຄົນ.

ໃນກອງປະຊຸມໄດ້ນຳສະເໜີກ່ຽວກັບພາບລວມໃນການຄຸ້ມຄອງຕິດຕາມກວດກາລະບົບຊຳລະ ແລະ ໄດ້ເນັ້ນໜັກເຖິງຄວາມສຳຄັນ ແລະ ເນື້ອໃນຂອງແບບຟອມທີ່ຈະສ້າງໃຫ້ເປັນຮູບແບບການລາຍງານທີ່ເປັນມາດຕະຖານດຽວກັນທົ່ວລະບົບ, ຮັບປະກັນໃຫ້ຜູ້ຄວບຄຸມລະບົບ ແລະ ຜູ້ໃຫ້ບໍລິການຊຳລະ ສະໜອງຂໍ້ມູນໃຫ້ພຽງພໍເພື່ອໃຫ້ການຄຸ້ມຄອງຕິດຕາມກວດກາສອດຄ່ອງຕາມກົດໝາຍ, ນິຕິກຳລຸ່ມກົດໝາຍ ແລະ ຫຼັກການຂອງສາກົນ, ພ້ອມທັງນຳໃຊ້ເປັນເຄື່ອງມືໃນການປະເມີນ ແລະ ການວິເຄາະການໃຫ້ບໍລິການຊຳລະທີ່ເປັນມູນຄ່າ ແລະ ເປັນທຸລະກຳ ເພື່ອຮັບໃຊ້ວຽກງານດານວາງນະໂຍບາຍດ້ານລະບົບການຊຳລະໃນອານາຄົດ.



ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນ ແລະ ຜູ້ເຂົ້າຮ່ວມໄດ້ມີການແລກປ່ຽນຄຳຄິດເຫັນ ແລະ ສອບຖາມກ່ຽວກັບຮ່າງແບບຟອມດັ່ງກ່າວຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມໃນຄັ້ງນີ້ໄດ້ຮັບຜົນສຳເລັດຕາມເປົ້າໝາຍທີ່ວາງໄວ້.

**# ຂ່າວ-ພາບ: ນ. ວັນປະເສີດ ສີມບູນຂັນ.**